# ຂໍ້ມູນການສັກຢາປ້ອງກັນພະຍາດ COVID-19 ສໍາລັບຄົນຕ່າງປະເທດທີ່ອາໄສຢູ່ໃນເກົາຫຼີ

ການຈອງລ່ວງໜ້າແມ່ນດໍາເນີນຕາມມາດຕະຖານແລະຂັ້ນຕອນດຽວກັນໂດຍບໍ່ ຈໍາແນກລະຫວ່າງປະຊາຊົນພາຍໃນປະເທດ ແລະຊາວຕ່າງປະເທດທີ່ອາໄສຢູ່ເກົາຫລີ. ຈອງກ່ອນສໍາລັບການສັກຢາວັກຊີນ COVID-19 ໂດຍການໝາຍຂີດໄຂວໃສ່ຜູ້ຮັບ ແລະວິທີການຈອງຂ້າງລຸ່ມນີ້.

□ ຜູ້ຮັບການສັກຢາປ້ອງກັນແລະວິທີການຈອງ

◦ ສໍາລັບຄົນຕ່າງປະເທດທີ່ລົງທະບຽນຄົນຕ່າງດ້າວ

- ການສັກຢາວັກຊີນສາມາດ ສະເໜີຂໍຕາມລໍາດັບອີງຕາມແຜນການສັກຢາກັນພະຍາດເດືອນສິງຫາ ຫາ ເດືອນກັນຍາ ສໍາລັບແຜນການແຕ່ລະເປົ້າໝາຍ, ແລະສາມາດສັ່ງຈອງຜ່ານທາງອອນໄລ ຫຼືທາງໂທລະສັບ.

* ຖ້າການຈອງທາງອອນໄລ ຫາກສະແດງວ່າ ທ່ານບໍ່ມີສິດໄດ້ຮັບ, ທ່ານສາມາດເຂົ້າໄປຫາສູນສຸຂະພາບສາທາລະນະທ້ອງຖິ່ນ ແລະຈອງບ່ອນ ຫຼັງຈາກທີ່ໄດ້ລົງທະບຽນເປັນຜູ້ສະໝັກ.

- ວິທີການສັ່ງຈອງ-

◦ (ອອນໄລນ-ທ່ານເອງ ແລະຕົວແທນຂອງທ່ານ) ເຂົ້າຫາລະບົບການຈອງການສັກຢາປ້ອງກັນ COVID -19 ລ່ວງໜ້າ (http://ncvr2.kdca.go.kr) ແລະດໍາເນີນການຈອງ.(ສາມາດຈອງໄດ້ໂດຍຕົວແທນຕັ້ງແຕ່ເວລາທ່ຽງຄືນຂອງວັນທີ 25 ສິງຫາ)

◦ (ໂທລະສັບ - ທ່ານເອງ ແລະຕົວແທນຂອງທ່ານ) ກວດເບິ່ງນໍ້າເບີໝາຍເລກການປຶກສາ ສໍາລັບການຈອງຂອງແຕ່ລະລັດຖະບານທ້ອງຖິ່ນທີ່ສູນຄວບຄຸມແລະປ້ອງກັນພະຍາດ ຂອງເກົາຫຼີ (1339) ຫຼືລະບົບການຈອງລ່ວງໜ້າການສັກວັກຊີນປ້ອງກັນ COVID -19 (ສະຖານະພາບການສັກຢາ (ເລື່ອນເມົ້າຂຶ້ນ) →ຄລິກໃສ່ ເນີນການຈອງທາງໂທລະສັບການສັກຢາປ້ອງກັນ COVID -19).

◦ ຄົນຕ່າງປະເທດທີ່ບໍ່ມີເລກທະບຽນຄົນຕ່າງດ້າວ (ບັດທະບຽນ) (ລວມທັງຄົນຕ່າງດ້າວທີ່ຜິດກົດໝາຍ)

- ບໍ່ສາມາດຈອງຜ່ານທາງອອນໄລ ຫຼື ທາງໂທລະສັບໄດ້.

- ທ່ານສາມາດສະເໜີຂໍການສັກຢາປ້ອງກັນພະຍາດໄດ້ໂດຍເຂົ້າໄປຫາສູນສຸຂະພາບສາທາລະນະທ້ອງຖິ່ນ ແລະ ຮັບເອົາຕົວເລກການ ຄຸ້ມຄອງຊົ່ວ ຄາວພ້ອມດ້ວຍ ໜັງສືເດີນທາງຂອງທ່ານ.

※ ຜູ້ອາໄສຢູ່ໃນໄລຍະສັ້ນ 90 ວັນຫຼື ໜ້ອຍກວ່າ ເຊັ່ນຜູ້ທີ່ເດີນທາງ ເພື່ອຈຸດປະສົງຢ້ຽມຢາມເກົາຫຼີ

- ຈະບໍ່ໄດ້ລວມເຂົ້າຢູ່ໃນຜູ້ທີ່ໄດ້ຮັບການສັກຢາປ້ອງກັນ.

□ ແຈ້ງການ

◦ ຄົນຕ່າງປະເທດທີ່ລົງທະບຽນແລ້ວ ທີ່ຕ້ອງການໄດ້ຮັບຂໍ້ມູນການສັກຢາປ້ອງກັນຕາມການ ສະເໜີຂໍຈອງລ່ວງໜ້າຕ້ອງອັບເດດເບີໂທລະສັບມືຖື ຂອງເຂົາເຈົ້າ.

- ເພື່ອປ່ຽນເບີໂທລະສັບ, ຈໍາເປັນຕ້ອງໄດ້ຮ້ອງຂໍໃຫ້ຫ້ອງການກວດຄົນເຂົ້າເມືອງທີ່ມີຄວາມສາມາດເຮັດໄດ້.

◦ <u>ຂໍ້ມູນການລະບຸຕົວຕົນແມ່ນໃຊ້ເພື່ອຈຸດປະສົງການສັກຢາປ້ອງກັນເທົ່ານັ້ນ, ແລະຄວາມຈິງຂອງການຢູ່ແບບບໍ່ຖືກຕ້ອງຕາມກົດໝາຍ ບໍ່ໄດ້ແຈ້ງໃຫ້ຫ້ອງການກວດຄົນເຂົ້າເມືອງ ຫຼືຫ້ອງການກວດຄົນເຂົ້າເມືອງອີງຕາມລະບົບແຈ້ງການບໍ່ເສຍພາສີ.</u>

◦ ສະຖານທີ່ສັກຢາວັກຊີນອາດຈະຖືກ ຈໍາກັດໂດຍຂຶ້ນກັບວ່າບຸກຄົນນັ້ນມີປະກັນໄພສຸຂະພາບຫຼືບໍ່.

<ການແປພາສານີ້ໄດ້ເຮັດຢູ່ທີ່ສູນກາງໂທລະສັບ ດານູຣີ 1577-1366>